ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ

ເລກທີ...22......./ກມສພ
ນະຄອນຫຼວງວຽງຈັນ, ວັນທີ..23.02.2026

# ມະຕິຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມສູນກາງພັກ

- ອີງຕາມກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XII.
- ອີງຕາມມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ສະບັບເລກທີ 03/ຄບສພ, ລົງວັນທີ 12 ມີນາ 2025.
- ອີງຕາມມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025.
- ອີງຕາມໜັງສືສະເໜີຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 90 /ຄຈສພ, ລົງວັນທີ 18 ກຸມພາ 2026.

ກົມການເມືອງສູນກາງພັກ ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ມະຕິຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະໂຄສະນາອົບຮົມສູນກາງພັກ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ ແລະ ລັດຖະບານໃນການຄຸ້ມຄອງ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ການພັດທະນາວຽກງານໂຄສະນາອົບຮົມ, ວຽກຄົ້ນຄວ້າທິດສະດີ-ສະຫຼຸບພຶດຕິກຳ ແລະ ວຽກງານຖະແຫຼງຂ່າວສື່ມວນຊົນ ໃນຂອບເຂດທົ່ວປະເທດ.



Scanned with CamScanner

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະໂຄສະນາອົບຮົມສູນກາງພັກ ຂຽນເປັນຕົວອັກສອນຫຍໍ້ວ່າ **"ຄອສພ"** ແລະ ມີຊື່ເປັນພາສາອັງກິດ **"Commission for Information and Education of the Central Committee"** ຂຽນຫຍໍ້ **"CIECC"** ແມ່ນອົງການເສນາທິການຂອງຄະນະບໍລິຫານງານສູນກາງພັກ ແລະ ລັດຖະບານ ມີຖານະທຽບເທົ່າຄະນະຂອງພັກຂັ້ນສູນກາງ ແລະ ກະຊວງ-ອົງການໃນກົງຈັກການຈັດຕັ້ງຂອງລັດ, ມີພາລະບົດບາດເປັນເສນາທິການໃຫ້ຄະນະບໍລິຫານງານສູນກາງພັກ ໂດຍສະເພາະແມ່ນກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ ໃນການເຮັດວຽກງານການເມືອງ-ແນວຄິດ, ວຽກງານຄົ້ນຄ້ວາທິດສະດີ ແລະ ສະຫຼຸບພຶດຕິກຳ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ ຂອງພັກ ແລະ ລັດຖະບານ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄົ້ນຄວ້າເຊື່ອມຊຶມ ແລະ ຜັນຂະຫຍາຍແນວທາງ-ນະໂຍບາຍຂອງພັກ-ລັດ ກ່ຽວກັບວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນໃນແຕ່ລະໄລຍະ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ;
2. ຄົ້ນຄວ້າກຳແໜ້ນມະຕິຂອງກອງປະຊຸມໃຫຍ່ຂອງພັກ ແລະ ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຕ່ລະຄັ້ງ ເພື່ອສ້າງເປັນເອກະສານສຶກສາອົບຮົມ, ເອກະສານເຜີຍແຜ່ເຊື່ອມຊຶມໃຫ້ສະມາຊິກພັກ, ພະນັກງານ, ຊັ້ນຄົນຕ່າງໆ ແລະ ປະຊາຊົນບັນດາເຜົ່າໃນທົ່ວປະເທດ;
3. ຄົ້ນຄວ້າວິໄສທັດ, ຍຸດທະສາດ, ທິດທາງ ແລະ ແຜນການເຄື່ອນໄຫວວຽກງານຄົ້ນຄວ້າທິດສະດີລະດັບຊາດ ເພື່ອສະເໜີຕໍ່ກົມການເມືອງສູນກາງພັກ;
4. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຖະແຫຼງຂ່າວສື່ມວນຊົນ ເພື່ອສະເໜີຕໍ່ຄະນະເລຂາທິການສູນກາງພັກ, ລັດຖະບານ ແລະ ສະພາແຫ່ງຊາດ ພິຈາລະນາ;
5. ຕິດຕາມກຳແໜ້ນສະພາບແນວຄິດ-ທາງສຽງສັງຄົມ ລວມທັງສະພາບການທີ່ພົ້ນເດັ່ນ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ມີຜົນກະທົບຕໍ່ແນວຄິດ-ຈິດຕະສາດຂອງຄົນໃນສັງຄົມ ແລະ ຕໍ່ຄວາມໝັ້ນຄົງຂອງລະບອບການປົກຄອງຂອງ ສປປ ລາວ; ພ້ອມທັງເປັນເຈົ້າການຄົ້ນຄວ້າ, ສະເໜີວິທີການ ແລະ ມາດຕະການແກ້ໄຂຕໍ່ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານຢ່າງທັນການ;
6. ສ້າງເອກະສານປາຖະກະຖາ, ໂຄສະນາ, ອະທິບາຍກ່ຽວກັບແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ນະໂຍບາຍ ແລະ ກົດໝາຍຂອງລັດ ກ່ຽວກັບສະພາບການທີ່ພົ້ນເດັ່ນຢູ່ພາຍໃນ ແລະ ຕ່າງປະເທດ ຕໍ່ແຕ່ລະເປົ້າໝາຍໃຫ້ແທດເໝາະ ແລະ ທັນການ;



Scanned with CamScanner

7. ສົມທົບກັບກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງ ແລະ ປັບປຸງຫຼັກສູດການຮຽນ-ການສອນທິດສະດີ, ແນວທາງຂອງພັກ ແລະ ວິຊາສັງຄົມ-ການເມືອງຢູ່ໃນສະຖາບັນການສຶກສາຊັ້ນຕ່າງໆ;
8. ສົມທົບກັບສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ກ່ຽວກັບວິທີການສຶກສາອົບຮົມຊາວໜຸ່ມ, ໄວໜຸ່ມ, ເຍົາວະຊົນ ໃຫ້ເຂົ້າໃຈ ແລະ ເຂົ້າຮ່ວມປະຕິບັດຕາມແນວທາງນະໂຍບາຍຂອງພັກ, ມີນໍ້າໃຈຮັກຊາດ, ມີອຸດົມການສັງຄົມນິຍົມ;
9. ຄົ້ນຄວ້າ ແລະ ນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນວຽກງານວິຊາສະເພາະ, ພ້ອມທັງຄຸ້ມຄອງລະບົບໄອທີ, ເຕັກນິກ, ຂໍ້ມູນຂ່າວ, ເວບໄຊ ຂອງຄະນະໂຄສະນາອົບຮົມສູນກາງພັກ ເພື່ອຮັບໃຊ້ໜ້າທີ່ວຽກງານໃຫ້ວ່ອງໄວ ແລະ ທັນການ;
10. ດໍາເນີນວຽກງານຖະແຫຼງຂ່າວສື່ມວນຊົນ ທີ່ເປັນກະບອກສຽງຂອງສູນກາງພັກ ແລະ ລັດຖະບານ ໃນການເຜີຍແຜ່ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ກົດໝາຍຂອງລັດຕໍ່ພາຍໃນ ແລະ ຕ່າງປະເທດ; ນໍາສະເໜີຂ່າວເຫດການຕ່າງໆທີ່ເກີດຂຶ້ນຢູ່ພາຍໃນ ແລະ ເຫດການທີ່ພົ້ນເດັ່ນທີ່ເກີດຂຶ້ນຢູ່ຕ່າງປະເທດຢ່າງມີການເລືອກເຟັ້ນ; ຕອບໂຕ້, ອະທິບາຍບັນຫາຕ່າງໆ ເຊິ່ງພົວພັນເຖິງທັດສະນະແນວຄິດ, ຄວາມຮັບຮູ້ທີ່ຜິດເຂວຂອງສັງຄົມຕໍ່ແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດ;
11. ຄຸ້ມຄອງການເຄື່ອນໄຫວຂອງສື່ມວນຊົນໃນທົ່ວປະເທດ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງການເຄື່ອນໄຫວຂອງນັກຂ່າວ, ສື່ມວນຊົນລາວ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຢູ່ພາຍໃນ ສປປ ລາວ ພ້ອມທັງນັກຂ່າວລາວທີ່ເຄື່ອນໄຫວຢູ່ຕ່າງປະເທດ; ເກັບກໍາ, ສໍາເນົາ ບັນດາສື່ສິ່ງພິມ, ສື່ເອເລັກໂຕຣນິກໃຫ້ເປັນລະບົບຄົບຊຸດ;
12. ຕິດຕາມ, ກວດກາ ແລະ ປະເມີນຜົນ ການໂຄສະນາ, ຖະແຫຼງຂ່າວຂອງສື່ມວນຊົນ ໃນແຕ່ລະໄລຍະ; ສັງລວມວິໄຈຂ່າວ ຂອງສື່ມວນຊົນຕ່າງປະເທດທີ່ອອກຂ່າວກ່ຽວກັບລາວ ເພື່ອຕອບສະໜອງຂໍ້ມູນໃຫ້ແກ່ພັກ ແລະ ລັດຖະບານຢ່າງທັນເວລາ; ຊຸກຍູ້, ສົ່ງເສີມທົ່ວສັງຄົມ ເຂົ້າຮ່ວມຂະບວນການແຂ່ງຂັນປະດິດສ້າງ ແລະ ພັດທະນາວຽກງານສື່ມວນຊົນໃຫ້ກວ້າງຂວາງຕໍ່ເນື່ອງ;
13. ອະນຸຍາດສ້າງຕັ້ງ ຫຼື ການຍຸບເລີກ, ການຜະລິດ, ການຈໍາໜ່າຍ, ການນໍາເຂົ້າ, ການສົ່ງອອກກ່ຽວກັບຜະລິດຕະພັນສິລະປະ ປະເພດ: ພາບ, ສຽງ ແລະ ຮູບພາບ; ໂຈະຊົ່ວຄາວທຸກການເຄື່ອນໄຫວວຽກງານຖະແຫຼງຂ່າວສື່ມວນຊົນຂອງການຈັດຕັ້ງພັກ, ລັດ, ລວມໝູ່, ສັງຄົມ, ນິຕິບຸກຄົນ ແລະ ບຸກຄົນ ຕາມຂັ້ນຄຸ້ມຄອງ;
14. ຄົ້ນຄວ້າ, ກໍານົດມາດຖານເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝເຂົ້າໃນວຽກງານສື່ມວນຊົນ ຢ່າງເປັນເອກະພາບ ແລະ ເໝາະສົມກັບເງື່ອນໄຂຕົວຈິງຂອງ ສປປ ລາວ;
15. ຈັດຕັ້ງຝຶກອົບຮົມຄວາມຮູ້ດ້ານທິດສະດີ, ແນວທາງ, ວຽກງານວິຊາສະເພາະທາງດ້ານວຽກງານໂຄສະນາ, ວຽກງານອົບຮົມ, ວຽກງານສັງລວມ-ຫາງສຽງສັງຄົມ, ວຽກງານໄອທີ, ວຽກງານສື່ມວນຊົນ, ການໄປທັດສະນະສຶກສາ ແລະ ວຽກງານອື່ນໆໃຫ້ແກ່ຜູ້ທີ່ເຮັດວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ ໃນຂອບເຂດທົ່ວປະເທດ; ສະໜອງຂໍ້ມູນຂ່າວສານ, ວັດຖຸອຸປະກອນ ແລະ ເຄື່ອງມືຮັບໃຊ້ວຽກງານໂຄສະນາອົບຮົມຕາມທິດທັນເປັນທັນສະໄໝ;



Scanned with CamScanner

16. ປຸກລະດົມກຳລັງແຮງຈາກສັງຄົມ ປະກອບສ່ວນເຂົ້າໃນວຽກງານໂຄສະນາອົບຮົມ ແລະ ວຽກງານສື່ມວນຊົນຂອງພັກ-ລັດ; ຈັດຕັ້ງຕາໜ່າງເພື່ອນຮ່ວມງານດ້ານວຽກງານໂຄສະນາອົບຮົມ, ວຽກງານສື່ມວນຊົນຢ່າງເປັນລະບົບ, ເຄື່ອນໄຫວເປັນປົກກະຕິ ແລະ ມີປະສິດທິຜົນ;
17. ຄົ້ນຄ້ວາປັບປຸງກົງຈັກການຈັດຕັ້ງ, ການຄຸ້ມຄອງ, ການສ້າງແຜນກຳນົດພະນັກງານ, ແຜນບຳລຸງ-ກໍ່ສ້າງພະນັກງານ, ກຳນົດຕຳແໜ່ງງານ, ການຈັດວາງສັບຊ້ອນພະນັກງານ; ການປະຕິບັດນະໂຍບາຍ, ການຍ້ອງຍໍຜົນງານ, ການປະເມີນຜົນ ແລະ ການປະຕິບັດວິໄນຕໍ່ພະນັກງານ ຕາມລະບຽບການທີ່ກຳນົດໄວ້;
18. ສ້າງ ແລະ ປັບປຸງພື້ນຖານໂຄງລ່າງສຳນັກງານ, ອາຄານສະຖານທີ່, ປະກອບພາຫະນະ, ວັດຖຸອຸປະກອນຕ່າງໆ ເພື່ອມີຄວາມສະດວກໃນການເຮັດວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນໃຫ້ມີເນື້ອໃນເລິກເຊິ່ງ, ກ້ວາງຂວາງວ່ອງໄວ ແລະ ທັນການ;
19. ຂຶ້ນແຜນການ, ແຜນງົບປະມານ, ສ້າງລາຍຮັບວິຊາການ (ພາກສ່ວນທີ່ມີເງື່ອນໄຂ) ພ້ອມທັງຄຸ້ມຄອງ-ນຳໃຊ້ງົບປະມານ, ຊັບສິນຂອງລັດເຂົ້າໃນການເຄື່ອນໄຫວວຽກງານໃຫ້ສອດຄ່ອງກັບກົດໝາຍ, ລະບຽບການຂອງລັດ ທີ່ກຳນົດໄວ້;
20. ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ-ກວດປົກກະຕິ, ການກວດກາຕີລາຄາການຈັດຕັ້ງປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ, ແຜນການ, ແຜນງານ, ໂຄງການເຄື່ອນໄຫວຂອງກົມທຽບເທົ່າກົມ; ຊຸກຍູ້ການປະຕິບັດຕາມແຜນດຳເນີນງານຂອງຄະນະພັກໂຄສະນາອົບຮົມສູນກາງພັກ;
21. ພົວພັນຮ່ວມມືກັບຕ່າງປະເທດ, ໂດຍສະເພາະປະເທດເພື່ອນມິດຍຸດທະສາດ ຕາມແນວທາງການຕ່າງປະເທດ ຂອງພັກ-ລັດ ແລະ ການເຫັນດີ ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ;
22. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ແລະ ຕາມທິດຊີ້ນຳຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ.

**ມາດຕາ 4 ຂອບເຂດສິດ**

1. ສະເໜີຕໍ່ຄະນະເລຂາທິການສູນກາງພັກ, ກົມການເມືອງສູນກາງພັກ ໂດຍປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ການບັນຈຸ, ສັບຊ້ອນ ແລະ ການຈັດວາງບຸກຄະລາກອນ, ການກຳນົດຕຳແໜ່ງຂອງຄະນະໂຄສະນາອົບຮົມສູນກາງພັກ ຕາມການແບ່ງຂັ້ນຄຸ້ມຄອງ;
2. ສະເໜີສ້າງ, ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຖະແຫຼງຂ່າວສື່ມວນຊົນຕໍ່ລັດຖະບານ ແລະ ສະພາແຫ່ງຊາດ;
3. ນຳພາ-ຊີ້ນຳການເຮັດວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນຕາມຄວາມຮັບຜິດຊອບຂອງຕົນ;
4. ອອກຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຕ່າງໆ ກ່ຽວກັບວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ ໃຫ້ກະຊວງ-ອົງການ ແລະ ທ້ອງຖິ່ນຈັດຕັ້ງປະຕິບັດ;
5. ນຳພາ-ຊີ້ນຳລວມວຽກງານຮອບດ້ານ, ແກ້ໄຂວຽກງານປະຈຳວັນ ແລະ ເຊັນເອກະສານຕ່າງໆ ຕາມຂອບເຂດສິດຄວາມຮັບຜິດຊອບຕາມກົດໝາຍ ແລະ ລະບຽບຂອງພັກກຳນົດໄວ້;



Scanned with CamScanner

6. ກ່າວເຕືອນ, ປັບໃໝ, ສັ່ງໂຈະ ແລະ ຍຸບເລີກ ການດຳເນີນກິດຈະການດ້ານຖະແຫຼງຂ່າວສື່ມວນຊົນຕາມການແບ່ງຂັ້ນຄຸ້ມຄອງ ເມື່ອມີການລະເມີດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
7. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ວິຊາການຄະນະໂຄສະນາອົບຮົມສູນກາງພັກເຂົ້າຮ່ວມປະຊຸມ ຫຼື ຜູ້ຮັບຜິດຊອບວຽກງານການເມືອງ-ແນວຄິດຂອງກະຊວງ-ອົງການ, ທ້ອງຖິ່ນ ເພື່ອປະຊຸມປຶກສາຫາລື, ຄົ້ນຄວ້າແກ້ໄຂບັນຫາ ຫຼື ເຜີຍແຜ່ແນະນຳກ່ຽວກັບທິດທາງ, ວິທີການ ແລະ ມາດຕະການດຳເນີນວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ ແລະ ວຽກງານຖະແຫຼງຂ່າວສື່ມວນຊົນ;
8. ປະສານສົມທົບກັບອົງການຈັດຕັ້ງຂອງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະ ບຸກຄົນອະດີດການນຳຜູ້ທີ່ມີບົດບາດ ເພື່ອປະກອບສ່ວນເຮັດວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ ແລະ ການປາຖະກະຖາໃນຫົວຂໍ້ຕ່າງໆ;
9. ສະເໜີຂັ້ນເທິງປະຕິບັດນະໂຍບາຍ, ຍ້ອງຍໍຜົນງານ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ລົງວິໄນຕໍ່ພະນັກງານ, ລັດຖະກອນ ໃນຂັ້ນຄຸ້ມຄອງຂອງຕົນຕາມລະບຽບກົດໝາຍ;
10. ຄຸ້ມຄອງ ແລະ ກວດກາການນຳໃຊ້ງົບປະມານ ແລະ ການສ້າງລາຍຮັບດ້ານວິຊາການເຂົ້າໃນງົບປະມານ ຂອງວຽກງານຖະແຫຼງຂ່າວສື່ມວນຊົນ, ການນຳໃຊ້ຊັບສິນຂອງລັດ ທີ່ຂຶ້ນກັບການຄຸ້ມຄອງ ຂອງຄະນະໂຄສະນາອົບຮົມສູນກາງພັກ ຕາມກົດໝາຍ, ລະບຽບການກຳນົດໄວ້;
11. ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກຊ່ວຍຈຳຕ່າງໆ ໃນການພົວພັນຮ່ວມມືກັບອົງການ ການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຄົ້ນຄວ້າທິດສະດີ ແລະ ວຽກງານສື່ມວນຊົນຂອງບັນດາປະເທດອ້າຍນ້ອງ ເພື່ອນມິດຍຸດທະສາດ ແລະ ສາກົນບົນພື້ນຖານລັດຖະທຳມະນູນ, ກົດໝາຍ ແລະ ການຕົກລົງ ຂອງຂັ້ນເທິງ;
12. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ.

## ໝວດທີ III
## ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງຄະນະໂຄສະນາອົບຮົມສູນກາງພັກ ປະກອບດ້ວຍ:

1. ຫ້ອງການ;
2. ກົມຈັດຕັ້ງ;
3. ກົມກວດກາ;
4. ກົມໂຄສະນາ;
5. ກົມອົບຮົມ;
6. ກົມຂໍ້ມູນຂ່າວສານ;
7. ກົມສື່ມວນຊົນ;
8. ຫ້ອງການສະພາທິດສະດີສູນກາງພັກ;



Scanned with CamScanner

9. ວາລະສານອະລຸນໃໝ່;
10. ສຳນັກຂ່າວສານປະເທດລາວ;
11. ວິທະຍຸກະຈາຍສຽງແຫ່ງຊາດລາວ;
12. ໂທລະພາບແຫ່ງຊາດລາວ;
13. ໜັງສືພິມປະຊາຊົນ;
14. ໜັງສືພິມພາສາຕ່າງປະເທດ.

ຄະນະໂຄສະນາອົບຮົມສູນກາງພັກ ມີກົງຈັກການຈັດຕັ້ງທາງດ້ານວິຊາການຂອງຕົນຢູ່ຂັ້ນທ້ອງຖິ່ນຕາມເງື່ອນໄຂຕົວຈິງຢູ່ແຕ່ລະຂັ້ນ ຕາມການຕົກລົງຂອງຄະນະປະຈຳພັກແຂວງ ໂດຍເອກະພາບ ກັບຄະນະໂຄສະນາອົບຮົມສູນກາງພັກ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

1. ຄະນະໂຄສະນາອົບຮົມສູນກາງພັກ ປະກອບມີຫົວໜ້າ 1 ສະຫາຍ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກກົມການເມືອງສູນກາງພັກ; ເປັນຜູ້ຮັບຜິດຊອບໂດຍກົງຕໍ່ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານກ່ຽວກັບຜົນສຳເລັດ ຫຼື ຂໍ້ຂາດຕົກບົກຜ່ອງທັງໝົດຂອງຄະນະໂຄສະນາອົບຮົມສູນກາງພັກ;
2. ມີຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກກົມການເມືອງສູນກາງພັກ ຫຼື ຄະນະເລຂາທິການສູນກາງພັກ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ; ເປັນຜູ້ຊ່ວຍຫົວໜ້າໃນການຊີ້ນຳ-ນຳພາລວມວຽກງານຂອງຄະນະໂຄສະນາອົບຮົມສູນກາງພັກ, ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ, ມີຄວາມຮັບຜິດຊອບຕໍ່ໝູ່ຄະນະ ແລະ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ກ່ຽວກັບຜົນສຳເລັດ ຫຼື ຂໍ້ຂາດຕົກບົກຜ່ອງໃນການປະຕິບັດໜ້າທີ່ວຽກງານທີ່ຕົນໄດ້ຮັບຕາມການມອບໝາຍ;
3. ມີຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າບັນນາທິການໃຫຍ່, ຜູ້ອຳນວຍການໃຫຍ່ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກຄະນະເລຂາທິການສູນກາງພັກ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ບົນພື້ນຖານການເຫັນດີເປັນເອກະພາບ ຂອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ;
4. ມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າບັນນາທິການໃຫຍ່, ຮອງຜູ້ອຳນວຍການໃຫຍ່ ຈຳນວນໜຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກຫົວໜ້າຄະນະໂຄສະນາອົບຮົມສູນກາງພັກຕາມການສະເໜີຂອງກົມຈັດຕັ້ງ ບົນພື້ນຖານການເຫັນດີຂອງຄະນະຈັດຕັ້ງສູນກາງພັກ;
5. ມີຫົວໜ້າພະແນກ, ຮອງຫົວໜ້າພະແນກ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຈາກຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ຕາມການສະເໜີຂອງກົມຈັດຕັ້ງ ບົນພື້ນຖານການເຫັນດີເປັນເອກະພາບຂອງຫ້ອງການ, ກົມ, ວາລະສານອະລຸນໃໝ່, ໜັງສືພິມປະຊາຊົນ, ວິທະຍຸກະຈາຍສຽງແຫ່ງຊາດ, ໂທລະພາບແຫ່ງຊາດ, ສຳນັກຂ່າວສານປະເທດລາວ ແລະ ໜັງສືພິມພາສາຕ່າງປະເທດ ທີ່ກ່ຽວຂ້ອງ;



Scanned with CamScanner

6. ມີພະນັກງານວິຊາການ ແລະ ພະນັກງານບໍລິຫານ ຕາມຕຳແໜ່ງງານ ແລະ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໜ້າທີ່ວຽກງານ.

## ໝວດທີ IV
## ຫຼັກການ, ແບບແຜນວິທີເຮັດວຽກ ແລະ ລະບອບການພົວພັນວຽກ

**ມາດຕາ 7 ຫຼັກການ**

ຄະນະໂຄສະນາອົບຮົມສູນກາງພັກ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການດັ່ງນີ້:

1. ປະຕິບັດແບບແຜນນຳພາ ແລະ ວິທີເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ຮັບປະກັນປະຊາທິປະໄຕໃນການຄົ້ນຄວ້າຕົກລົງຕັດສິນບັນຫາລວມຂອງຄະນະໂຄສະນາອົບຮົມສູນກາງພັກ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ; ນຳໃຊ້ຄວາມຮູ້, ຄວາມສາມາດຂອງຕົນຢ່າງສຸດຂີດ ເພື່ອເຮັດຫຼ້ອນໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວວຽກງານຂອງຄະນະໂຄສະນາອົບຮົມສູນກາງພັກ ແມ່ນອີງໃສ່ແນວທາງ, ກົດລະບຽບຂອງພັກ; ກົດໝາຍ, ລະບຽບການຂອງລັດ ເພື່ອນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂອງຄະນະໂຄສະນາອົບຮົມສູນກາງພັກ;
2. ເຮັດວຽກຕິດພັນກັບຮາກຖານ, ຕິດພັນຕົວຈິງ ແລະ ຕິດພັນກັບຄະນະພັກ-ຄະນະນຳແຕ່ລະຂັ້ນ ເພື່ອຕິດຕາມ, ກວດກາ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ, ດ້ານອ່ອນໃນການຈັດຕັ້ງປະຕິບັດແຜນການໃນແຕ່ລະໄລຍະ, ພ້ອມທັງປະຕິບັດການລາຍງານສ່ອງແສງຢ່າງເປັນປົກກະຕິ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດການລາຍງານ ໃຫ້ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ ເປັນປົກກະຕິ;
4. ຄະນະໂຄສະນາອົບຮົມສູນກາງພັກ ພົວພັນກັບບັນດາອົງການ-ຄະນະຂອງພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ຄະນະພັກກະຊວງ-ອົງການ, ຄະນະພັກແຂວງ-ນະຄອນຫຼວງ, ຄະນະໂຄສະນາອົບຮົມແຂວງ-ນະຄອນຫຼວງ ດ້ານວິຊາການ, ວິຊາສະເພາະ ແລະ ປະຕິບັດຮັບສ່ອງແສງລາຍງານຢ່າງເປັນປົກກະຕິ ຕາມພາລະບົດບາດ ແລະ



Scanned with CamScanner

ຕາມການມອບໝາຍຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ຄະນະໂຄສະນາອົບຮົມສູນກາງພັກ ເປັນຫົວໜ່ວຍງົບປະມານຂັ້ນໜຶ່ງ, ມີງົບປະມານສະເພາະ ແລະ ຕາປະທັບຂອງຕົນ (ສໍາລັບເບື້ອງພັກ ແລະ ເບື້ອງລັດ) ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ຄະນະໂຄສະນາອົບຮົມສູນກາງພັກ ເປັນຜູ້ກໍານົດກ່ຽວກັບພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ແບບແຜນວິທີເຮັດວຽກ ຂອງກົງຈັກຊ່ວຍວຽກ ທີ່ໄດ້ກໍານົດໄວ້ໃນມາດຕາ 5 ຂອງມະຕິຕົກລົງສະບັບນີ້.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ຄະນະໂຄສະນາອົບຮົມສູນກາງພັກ, ອົງການຈັດຕັ້ງຕ່າງໆ ຂອງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະບັດມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ມະຕິຕົກລົງສະບັບນີ້ ປ່ຽນແທນມະຕິຕົກລົງຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 20/ກມສພ, ລົງວັນທີ 13/10/2022 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕ.ກົມການເມືອງສູນກາງພັກ
ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ

ທອງລຸນ ສີສຸລິດ



Scanned with CamScanner